**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ | ເລກທີ 88/ ນຍ

ນະຄອນຫຼວງວຽງຈັນ, ວັນທີ 03 / 06/ 2008

# ດຳລັດ
# ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ສະບັບເລກທີ 169/ອຄດຊ, ລົງວັນທີ 9 ເມສາ 2007.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ວາງອອກ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການນຳໃຊ້ ແລະ ການພັດທະນາທີ່ດິນໃຫ້ມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ, ຖືກຕ້ອງຕາມເປົ້າໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ຄວາມໝາຍທີ່ດິນ**

ຄວາມໝາຍທີ່ດິນ ທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 2 ຂອງກົດໝາຍທີ່ດິນປະກອບມີ :

" **ໜ້າດິນ** " ໝາຍເຖິງທີ່ດິນທຸກຕອນທີ່ປະກອບມີຕົ້ນໄມ້, ເຄືອງປ່າຂອງດົງ, ຊີວະນາໆພັນ, ພືດ ແລະ ອື່ນໆ.

" **ພື້ນດິນ** " ໝາຍເຖິງທີ່ດິນທຸກຕອນຊຶ່ງປະກອບມີແຮ່ທາດຕ່າງໆເຊັ່ນ : ແຮ່ທອງແດງ, ແຮ່ທອງປະສົມ, ຊັ້ນຫີນປູນ, ແຮ່ທອງແດງໃນຮູບແບບຫີນອັກຄະນີ, ສາຍແຮ່ຄຳ, ສາຍແຮ່ໂລ ຫະປະສົມ ( ກົ່ວ, ຊືນ, ເງິນ), ແກ້ວປະເສີດ ລວມທັງດິນດາກ, ຫີນແຮ່, ນ້ຳໃຕ້ດິນ ແລະ ອື່ນໆ.

" **ເກາະດອນ** " ໝາຍເຖິງທີ່ດິນທຸກຕອນທີ່ຢູ່ກາງນ້ຳ ຊຶ່ງເກີດຂຶ້ນຕາມທຳມະຊາດ ຫຼື ທີ່ດິນປັ້ງຂຶ້ນໃໝ່ທີ່ຢູ່ໃນຂອບເຂດທີ່ດິນບໍລິເວນນ້ຳ.

" **ດິນພື້ນນ້ຳ** " ໝາຍເຖິງທີ່ດິນທຸກຕອນທີ່ຢູ່ພື້ນນ້ຳໃນທີ່ດິນບໍລິເວນນ້ຳ ຊຶ່ງປະກອບມີສັດນ້ຳ, ພືດນ້ຳ, ແຮ່ທາດ ແລະ ອື່ນໆ.

" **ນ່ານນ້ຳ ແລະ ນ່ານຟ້າ** " ໝາຍເຖິງຂອບເຂດດິນແດນທີ່ໄດ້ຢູ່ໃນສິດອຳນາດອະທິປະໄຕຂອງ ສປປ ລາວ ຊຶ່ງປະກອບມີສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ.

## ມາດຕາ 3. ຄວາມໝາຍຂອງຄຳສັບທີ່ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍທີ່ດິນ

" **ສິດນຳໃຊ້ທີ່ດິນ** " ໝາຍເຖິງສິດຂອງບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ທີ່ດິນຖາວອນ ໂດຍມີໃບຕາດິນ ຊຶ່ງແມ່ນເອກະສານທີ່ເປັນຫຼັກຖານ ກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນ ຊຶ່ງໄດ້ມາຈາກການມອບ, ການແລກປ່ຽນ, ການຊື້ - ຂາຍ ແລະ ການສືບທອດມູນມໍຣະດົກ. ສິດນຳໃຊ້ທີ່ດິນປະກອບດ້ວຍສິດປົກປັກຮັກສາ, ສິດໃຊ້ທີ່ດິນ, ສິດໄດ້ຮັບໝາກຜົນຈາກທີ່ດິນ, ສິດໂອນສິດນຳໃຊ້ທີ່ດິນ ແລະ ສິດສືບທອດສິດນຳໃຊ້ທີ່ດິນ. ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດນຳໃຊ້ທີ່ດິນດັ່ງກ່າວມີສິດເອົາທີ່ດິນໃຫ້ຜູ້ອື່ນເຊົ່າ,ເອົາໄປເປັນຫຼັກຊັບຄ້ຳປະກັນ, ເອົາໄປຮ່ວມທຶນ ຫຼື ເອົາໄປເປັນຮຸ້ນ, ແລກປ່ຽນ ຫຼື ຂາຍສິດນຳໃຊ້ນັ້ນກໍ່ໄດ້.

" **ສິດໃຊ້ທີ່ດິນ** " ໝາຍເຖິງການຈັດຕັ້ງ ຫຼື ບຸກຄົນ ທີ່ໄດ້ຮັບສິດໃຊ້ທີ່ດິນ ຕາມແຜນການຈັດສັນທີ່ດິນຂອງລັດ. ສຳລັບການຈັດຕັ້ງມີສິດພຽງແຕ່ປົກປັກຮັກສາ ແລະ ໃຊ້ເທົ່ານັ້ນຕາມທີ່ກຳນົດໄວ້ໃນມາດຕາ 55 ແລະ 59 ຂອງກົດໝາຍວ່າດ້ວຍທີ່ດິນ. ສ່ວນບຸກຄົນທີ່ໄດ້ຮັບສິດໃຊ້ທີ່ດິນມີພຽງແຕ່ສິດຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້, ໄດ້ຮັບໝາກຜົນຈາກທີ່ດິນ ແລະ ສືບທອດເທົ່ານັ້ນ.

" **ໃບຢັ້ງຢືນທີ່ດິນ** " ໝາຍເຖິງເອກະສານທາງການທີ່ຢັ້ງຢືນກ່ຽວກັບສິດໃຊ້ທີ່ດິນຂອງບຸກຄົນ ຫຼື ການຈັດຕັ້ງ ເຊັ່ນ : ໃບຢັ້ງຢືນກ່ຽວກັບການນຳໃຊ້ທີ່ດິນຊົ່ວຄາວ.

" **ການເຊົ່າທີ່ດິນ** " ໝາຍເຖິງການໃຫ້ເຊົ່າທີ່ດິນໂດຍລັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ ໃຫ້ແກ່ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

" **ການສຳປະທານທີ່ດິນ** " ໝາຍເຖິງການອະນຸຍາດໃຫ້ບຸກຄົນ ຫຼື ນິຕິບຸກຄົນສຳປະທານໂດຍການໃຫ້ສິດໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງຕາມເງື່ອນໄຂ ແລະ ກຳນົດເວລາໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ຜູ້ໄດ້ຮັບສຳປະທານທີ່ ດິນຕ້ອງເສັຍຄ່າສຳປະທານ, ເສັຍຄ່າຊັບພະຍາກອນ ແລະ ຄ່າທຳນຽມຕ່າງໆຕາມກົດໝາຍກຳນົດໄວ້.

" **ຄົນໃນຄອບຄົວ** " ໝາຍເຖິງຜົວ, ເມຍ, ລູກຄີງ, ລູກລ້ຽງ ແລະ ລູກບ້າ ຂອງຜູ້ມີຊື່ທີ່ມີສິດຢູ່ໃນໃບຕາດິນຖ້າເປັນລູກລ້ຽງຕ້ອງມີການຢັ້ງຢືນການຮັບເອົາເດັກມາເປັນລູກລ້ຽງຢ່າງຖືກຕ້ອງຕາມກົດໝາຍ.

" **ແຮງງານໃນຄອບຄົວ** " ໝາຍເຖິງຄົນໃນຄອບຄົວທີ່ມີອາຍຸແຕ່ 14 ປີ ຂຶ້ນໄປ ທີ່ສາມາດອອກແຮງງານດ້ວຍເຫື່ອແຮງ ຫຼື ມັນສະໝອງ.

" **ທີ່ດິນລັດ** " ໝາຍເຖິງທີ່ດິນທຸກຕອນລວມທັງຊັບພະຍາກອນທຳມະຊາດທີ່ຢູ່ເທິງດິນແດນ ສປປ ລາວ ຍົກເວັ້ນທີ່ດິນ ທີ່ອົງການຂອງລັດໄດ້ອອກເອກະສານຢັ້ງຢືນສິດນຳໃຊ້ທີ່ດິນໃຫ້ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງນຳໃຊ້ ໂດຍມີໃບຕາດິນຖືກຕ້ອງຕາມກົດໝາຍ.

" **ທີ່ດິນລວມໝູ່** " ໝາຍເຖິງທີ່ດິນທຸກຕອນ ແລະ ຊັບພະຍາກອນທຳມະຊາດທີ່ຢູ່ເທິງດິນແດນ ສປປ ລາວ ທີ່ລັດໄດ້ມອບສິດໃຊ້ທີ່ດິນ ໃຫ້ເປັນສ່ວນລວມຂອງບ້ານ, ການຈັດຕັ້ງ ແລະ ບັນດາອົງການຈັດຕັ້ງຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍວ່າດ້ວຍທີ່ດິນ.

" **ຜູ້ທີ່ປະໜີ** " ຕາມມາດຕາ 74 ຂອງກົດໝາຍວ່າດ້ວຍທີ່ດິນໝາຍເຖິງບຸກຄົນທີ່ໄດ້ປະທີ່ດິນຂອງຕົນແລ້ວໄປຢູ່ທ້ອງຖິ່ນອື່ນໃນສະໄໝຕໍ່ສູ້ກູ້ຊາດແມ່ນໝົດສິດມາທວງເອົາທີ່ດິນນັ້ນຄືນ ຊຶ່ງບໍ່ກວມເອົາຜູ້ທີ່ໄປເຮັດການປະຕິວັດ.

" **ທີ່ດິນທີ່ອົງການປົກຄອງໄດ້ມອບສິດນຳໃຊ້ໃຫ້ປະຊາຊົນໃນສະໄໝຕໍ່ສູ້ກູ້ຊາດ** " ໝາຍເຖິງທີ່ດິນ ທີ່ອຳນາດການປົກຄອງໄດ້ຈັດສັນໃຫ້ປະຊາຊົນບັນດາເຜົ່າລົງມາຕັ້ງຖິ່ນຖານ ຫຼື ທຳມາຫາກິນແລ້ວນັ້ນ ແມ່ນລັດບໍ່ຮັບຮູ້ການທວງເອົາຄືນຈາກເຈົ້າຂອງເດີມ.

" **ຜູ້ທີ່ປະທີ່ດິນຂອງຕົນແລ້ວໜີໄປຢູ່ຕ່າງປະເທດ** " ໝາຍເຖິງຜູ້ທີ່ໄປຢູ່ຕ່າງປະເທດເກີນເຈັດປີ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ໄປຢູ່ຕ່າງປະເທດ ໂດຍໄດ້ຮັບອະນຸຍາດແຕ່ຫາກຢູ່ເກີນກຳນົດ ແລະ ບໍ່ຢູ່ໃນການຄຸ້ມຄອງຂອງສະຖານທູດ ຫຼື ກົງສູນລາວປະຈຳປະເທດນັ້ນ ແລະ ຂາດສາຍພົວພັນທາງດ້ານກົດໝາຍກັບລັດ ສປປ ລາວ ເກີນ ສິບປີ ແມ່ນໝົດສິດມາທວງເອົາທີ່ດິນນັ້ນຄືນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍວ່າດ້ວຍທີ່ດິນ ແລະ ມາດຕາ 20 ຂອງກົດໝາຍວ່າດ້ວຍສັນຊາດລາວ.

" **ການຄຸ້ມຄອງທີ່ດິນ** " ໝາຍເຖິງຂະບວນການທີ່ເຮັດໃຫ້ທີ່ດິນໄດ້ມີການປົກປັກຮັກສາ, ຈັດສັນ ແລະ ການພັດທະນາຢ່າງມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ, ຖືກຕ້ອງຕາມເປົ້າໝາຍດ້ວຍການເກັບກຳຂໍ້ມູນຂ່າວສານທີ່ດິນ, ວາງລະບຽບການ, ກຳນົດມາດຕະການໃນການຄຸ້ມຄອງ, ກວດກາ ແລະ ປະເມີນຜົນກະທົບດ້ານສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ.

" **ການປົກປັກຮັກສາທີ່ດິນ** " ໝາຍເຖິງການນຳໃຊ້ ແລະ ໃຊ້ທີ່ດິນຕາມແຜນການຈັດສັນ, ກຳນົດເຂດ, ແບ່ງປະເພດ ແລະ ແຜນການນຳໃຊ້ທີ່ດິນ ບໍ່ໃຫ້ມີການປ່ຽນສະພາບຂອງດິນ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມກັບແຕ່ລະປະເພດທີ່ດິນ ແລະ ບໍ່ໃຫ້ມີກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ຫຼື ສັງຄົມ.

" **ການພັດທະນາທີ່ດິນ** " ໝາຍເຖິງການປົກປັກຮັກສາ ແລະ ປັບປຸງທີ່ດິນດ້ວຍການລົງທຶນດ້ານແຮງງານ, ວັດຖຸ, ທຶນຮອນ, ເຕັກໂນໂລຊີ, ການກໍ່ສ້າງພື້ນຖານໂຄງລ່າງ ເພື່ອເຮັດໃຫ້ທີ່ດິນມີຄຸນນະພາບດີ ໃຫ້ແທດເໝາະກັບການນຳໃຊ້ທີ່ດິນແຕ່ລະປະເພດ, ເຮັດໃຫ້ສະມັດຕະພາບການຜະລິດ ແລະ ທີ່ດິນມີມູນຄ່າເພີ່ມຂຶ້ນ.

" **ການນຳໃຊ້ທີ່ດິນ** " ໝາຍເຖິງການຊົມໃຊ້ທີ່ດິນຂອງບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງໃນນັ້ນລວມທັງການປົກປັກຮັກສາ, ການພັດທະນາ, ການນຳໃຊ້ທີ່ດິນ, ການໄດ້ຮັບໝາກຜົນຈາກທີ່ດິນ ແຕ່ລະປະເພດທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຕາມຄວາມຄ້ອຍຊັນທີ່ໄດ້ຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນເຂົ້າໃນເປົ້າໝາຍໃດໜຶ່ງໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

" **ການບໍລິຫານທີ່ດິນ** " ໝາຍເຖິງການເກັບຂໍ້ມູນ, ວິເຄາະຂໍ້ມູນກ່ຽວກັບທີ່ດິນ, ການສຳຫຼວດຈັດສັນ, ການຂຶ້ນ ແລະ ຈົດທະບຽນສິດນຳໃຊ້ທີ່ດິນ, ການປະເມີນມູນຄ່າທີ່ດິນ ເພື່ອແນໃສ່ການຄຸ້ມຄອງທີ່ດິນຢ່າງມີປະສິດທິຜົນ, ມີຄວາມສະຫງົບ, ຍຸຕິທຳ ແລະ ສອດຄ່ອງຕາມລະບຽບກົດໝາຍ.

" **ການບໍລິການທີ່ດິນ** " ໝາຍເຖິງການບໍລິການຂໍ້ມູນຂ່າວສານກ່ຽວກັບທີ່ດິນ, ການພັດທະນາທີ່ດິນ, ການໃຫ້ຄຳແນະນຳວິທີການຈົດທະບຽນທີ່ດິນ, ການຊື້-ຂາຍສິດນຳໃຊ້ທີ່ດິນ, ໃຫ້ການປຶກສາເພື່ອອຳນວຍຄວາມສະດວກໃຫ້ແກ່ສັງຄົມລວມທັງນັກລົງທຶນພາຍໃນ ແລະ ຕ່າງປະເທດເຂົ້າໃນກິດຈະການຕ່າງໆທີ່ພົວພັນກັບທີ່ດິນ.

## ມາດຕາ 4. ການສົ່ງເສີມການພັດທະນາທີ່ດິນ

ອົງການຄຸ້ມຄອງທີ່ດິນແຫ່ງຊາດເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນເພື່ອສ້າງເງື່ອນໄຂໃຫ້ແກ່ການສົ່ງເສີມການພັດທະນາທີ່ດິນດ້ວຍການ:

1. ເກັບກຳຂໍ້ມູນ ແລະ ວາງແຜນ;
2. ຄົ້ນຄວ້ານະໂຍບາຍ ແລະ ລະບຽບການ;
3. ນຳໃຊ້ແຮງງານ, ທີ່ດິນ, ວັດຖຸ, ທຶນຮອນ, ເຕັກນິກ, ເຕັກໂນໂລຊີຂອງລັດ, ບຸກຄົນ ຫຼື ຂອງການຈັດຕັ້ງເຂົ້າໃນການພັດທະນາທີ່ດິນ ເພື່ອສ້າງພື້ນຖານໂຄງລ່າງ.

ລັດຖະບານສ້າງຕັ້ງບໍລິສັດພັດທະນາ ແລະ ບໍລິການທີ່ດິນເພື່ອເຮັດໜ້າທີ່ພັດທະນາ ແລະ ບໍລິການທີ່ດິນ ຕາມການຕົກລົງຂອງລັດ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດດັ່ງກ່າວກຳນົດໄວ້ຢູ່ໃນລະບຽບການສະເພາະ.

## ມາດຕາ 5. ການອະນຸຍາດໃຫ້ສິດນຳໃຊ້ ຫຼື ສິດໃຊ້ທີ່ດິນ

ນັບແຕ່ວັນປະກາດໃຊ້ກົດໝາຍວ່າດ້ວຍທີ່ດິນເປັນຕົ້ນໄປ ຖ້າບຸກຄົນ ແລະ ການຈັດຕັ້ງໃດຫາກຕ້ອງການນຳໃຊ້ທີ່ດິນ ຕ້ອງຍື່ນຄຳຮ້ອງຂໍຕໍ່ໜ່ວຍງານທີ່ດິນ ປະຈຳບ້ານ ເພື່ອສະເໜີຕໍ່ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ ຄົ້ນຄວ້າ ແລະ ນຳສະເໜີຕໍ່ອົງການປົກຄອງເມືອງ, ເທດສະບານ ພິຈາລະນາຕາມຂອບເຂດສິດອຳນາດຂອງຕົນ.

ຜູ້ທີ່ໄດ້ຈັບຈອງທີ່ດິນໃນໄລຍະຜ່ານມາທີ່ບໍ່ນອນຢູ່ໃນຂໍ້ 1 ແລະ ຂໍ້ 2 ທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້ ທີ່ໄດ້ພັດທະນາແລ້ວແຕ່ຫາກຍັງບໍ່ທັນໄດ້ຮັບສິດນຳໃຊ້ກໍ່ໃຫ້ໄປແຈ້ງຕໍ່ອົງການທີ່ກ່ຽວຂ້ອງ ເພື່ອຂໍສິດນຳໃຊ້.

### ມາດຕາ 6. ການຫ້າມຈັບຈອງທີ່ດິນ

ການຈັບຈອງທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍລ້ວນແຕ່ຖືກລຶບລ້າງ ໃນກໍລະນີໄດ້ກໍ່ຄວາມເສັຍຫາຍຕ້ອງດໍາເນີນຄະດີຕາມຂະບວນການຍຸຕິທໍາ.

ການຈັບຈອງທີ່ດິນໂດຍບໍ່ຖືກຕ້ອງຕາມກົດໝາຍສະແດງອອກດັ່ງນີ້:

1. ຈັບຈອງທີ່ດິນ ເຂດປ່າສະຫງວນ, ປ່າດົງດິບ, ປ່າຍອດນໍ້າ, ທີ່ດິນບໍລິເວນບໍ່ແຮ່, ບໍລິເວນເຂດວັດທະນະທໍາ ແລະ ບູຮານສະຖານ, ເຂດທ່ອງທ່ຽວທໍາມະຊາດ, ເຂດປະຫວັດສາດ ແລະ ເຂດສະຫງວນຂອງລັດ;
2. ຈັບຈອງທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ ດ້ວຍຮູບການຂຸດດິນເຮັດຮ່ອງ, ປູກຕົ້ນໄມ້, ປັກຕາແຫຼວ, ລ້ອມຮົ້ວໄວ້, ປຸກເຮືອນ ຫຼື ຮ້ານເພື່ອໝາຍບ່ອນ, ໝາຍເຂດແດນ ຫຼື ແບ່ງເຂດແດນຕາມສາຍນໍ້າ ແລະ ຫ້ວຍນໍ້າຕາມທໍາມະຊາດ ແລ້ວໃຊ້ສິດຫວງຫ້າມສະຫງວນເປັນຂອງຕົນ ຫຼື ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງບຸກລຸກເອົາທີ່ດິນເຂດສະຫງວນຂອງລັດ ແລະ ທີ່ດິນ ທີ່ລັດຍັງບໍ່ທັນໄດ້ຈັດສັນ.

### ມາດຕາ 7. ການຫ້າມອອກໜັງສືອະນຸຍາດໃຫ້ສິດນໍາໃຊ້ ຫຼື ສິດໃຊ້ທີ່ດິນ

ຫ້າມບໍ່ໃຫ້ອົງການປົກຄອງທ້ອງຖິ່ນ ແລະ ອົງການທີ່ມີສິດອໍານາດກ່ຽວຂ້ອງອອກໜັງສືອະນຸຍາດໃຫ້ສິດນໍາໃຊ້ ຫຼື ສິດໃຊ້ທີ່ດິນແກ່ບຸກຄົນ ຫຼື ການຈັດຕັ້ງ ຕາມປະເພດທີ່ດິນ ດັ່ງລຸ່ມນີ້:

1. ທີ່ດິນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າດົງດິບ;
2. ທີ່ດິນບໍລິເວນອ່າງເກັບນໍ້າທໍາມະຊາດ ;
3. ທີ່ດິນຍອດຫ້ວຍ, ຍອດແມ່ນໍ້າ, ລໍາເຊ, ທີ່ດິນແຄມໜອງ, ບຶງຕາມທໍາມະຊາດ ແລະ ທີ່ດິນ ທີ່ລັດສະຫງວນໄວ້;
4. ທີ່ດິນເຂດສະຫງວນຫວງຫ້າມ ຂອງລັດ ແລະ ລວມໝູ່;
5. ທີ່ດິນບໍລິເວນບໍ່ແຮ່;
6. ທີ່ດິນເຂດວັດທະນະທໍາ, ບູຮານສະຖານ, ເຂດປະຫວັດສາດ ແລະ ເຂດທ່ອງທ່ຽວທໍາມະຊາດ;
7. ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
8. ທີ່ດິນຄົມມະນາຄົມ ທີ່ສະຫງວນໄວ້ສ້າງທາງ ຫຼື ສ້າງສິ່ງສາທາລະນະປະໂຫຍດອື່ນໆ;
9. ທີ່ດິນ ທີ່ສະຫງວນໄວ້ສໍາລັບສ້າງສາຍສົ່ງ ຫຼື ແລວສາຍໄຟຟ້າ;
10. ທີ່ດິນ ທີ່ມີລະບຽບກົດໝາຍຫວງຫ້າມແລ້ວ.

## ໝວດທີ II
## ການຄຸ້ມຄອງທີ່ດິນ

**ມາດຕາ 8. ຫຼັກການລວມ ຂອງການຄຸ້ມຄອງທີ່ດິນ**

ລັດຄຸ້ມຄອງທີ່ດິນຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດໂດຍລັດຖະບານມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ເປັນຜູ້ຮັບຜິດຊອບຕາມສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນ ດ້ວຍການປະສານສົມທົບກັບບັນດາຂະແໜງການຄຸ້ມຄອງການນຳໃຊ້ທີ່ດິນ, ຂະແໜງການອື່ນໆທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຄົ້ນຄວ້ານະໂຍບາຍ, ກົນໄກ, ຫຼັກການ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ແລະ ບໍລິຫານທີ່ດິນ.

**ມາດຕາ 9. ການຄຸ້ມຄອງທີ່ດິນ ຕາມຂະແໜງການ**

ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ ຄົ້ນຄວ້ານະໂຍບາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງການນຳໃຊ້ທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີລັດຖະບານອະນຸມັດ.

ເພື່ອຮັບປະກັນໃຫ້ວຽກງານການຄຸ້ມຄອງການນຳໃຊ້ທີ່ດິນ ໃນຂະແໜງການຂອງຕົນມີປະສິດທິຜົນ ໃຫ້ກະຊວງຕ່າງໆ ທີ່ກ່າວມາຂ້າງເທິງນັ້ນຈັດຕັ້ງໜ່ວຍງານຮັບຜິດຊອບ.

ບັນດາຂະແໜງການຄຸ້ມຄອງການນຳໃຊ້ທີ່ດິນ ຕາມທີ່ລະບຸໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍທີ່ດິນຕ້ອງສະໜອງຂໍ້ມູນກ່ຽວກັບສະພາບການນຳໃຊ້ທີ່ດິນ ຂອງຂະແໜງການຕົນໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ເພື່ອສັງລວມ ແລະ ກວດກາ.

**ມາດຕາ 10. ການຄຸ້ມຄອງທີ່ດິນ ຂັ້ນທ້ອງຖິ່ນ**

ອົງການຄຸ້ມຄອງທີ່ດິນ ຂັ້ນທ້ອງຖິ່ນ ປະກອບມີ:

1. ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ;
2. ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ;
3. ໜ່ວຍງານທີ່ດິນ ປະຈຳບ້ານ.

ອົງການຄຸ້ມຄອງທີ່ດິນຂັ້ນທ້ອງຖິ່ນມີຂໍ້ກຳນົດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະແຕ່ລະຂັ້ນ.

**ມາດຕາ 11. ສິດ ແລະ ໜ້າທີ່ລວມຂອງອົງການຄຸ້ມຄອງທີ່ດິນຂັ້ນທ້ອງຖິ່ນ**

ອົງການຄຸ້ມຄອງທີ່ດິນ ຂັ້ນທ້ອງຖິ່ນ ມີສິດ ແລະ ໜ້າທີ່ລວມດັ່ງນີ້:

1. ຄຸ້ມຄອງ ແລະ ບໍລິຫານທີ່ດິນ;
2. ຄຸ້ມຄອງການຂຶ້ນທະບຽນ, ຈົດທະບຽນ ແລະ ປະເມີນລາຄາທີ່ດິນ;

3. ສຳຫຼວດວັດແທກ, ຈັດສັນທີ່ດິນ, ກຳນົດເຂດ, ຈັດປະເພດ ແລະ ວາງແຜນນຳໃຊ້ທີ່ດິນ, ໃຫ້ເຊົ່າ, ໃຫ້ສຳປະທານ, ສ້າງສຳມະໂນທີ່ດິນ, ຖອນສິດນຳໃຊ້ທີ່ດິນ;
4. ອອກໃບແຜນທີ່ດິນ ແລະ ອອກໃບຕາດິນ;
5. ເກັບກຳສະຖິຕິ ແລະ ຂໍ້ມູນຂ່າວສານທີ່ດິນ ແລະ ໃຫ້ການບໍລິການທີ່ດິນ;
6. ກວດກາການນຳໃຊ້ທີ່ດິນ;
7. ເກັບກຳ, ສະຫຼຸບສັງລວມຂໍ້ມູນສະຖິຕິ ແລະ ສະພາບການປ່ຽນແປງກ່ຽວກັບການນຳໃຊ້ທີ່ດິນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອລາຍງານໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ.
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງອົງການປົກຄອງທ້ອງຖິ່ນ ແລະ ການຊີ້ນຳວິຊາການຈາກອົງການຄຸ້ມຄອງທີ່ດິນແຫ່ງຊາດ.

ສຳລັບການແບ່ງສິດ ແລະ ໜ້າທີ່ລະອຽດຂອງອົງການຄຸ້ມຄອງທີ່ດິນທ້ອງຖິ່ນແຕ່ລະຂັ້ນນັ້ນ ມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ເປັນຜູ້ກຳນົດສະເພາະ.

## ມາດຕາ 12. ລະບົບຂໍ້ມູນຂ່າວສານກ່ຽວກັບທີ່ດິນ

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ສ້າງຕັ້ງສູນຄົ້ນຄ້ວາ ແລະ ຂໍ້ມູນຂ່າວສານກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ພື້ນດິນແດນຂອງ ສປປ ລາວ ຂຶ້ນເພື່ອເກັບກຳ ແລະ ສັງລວມຂໍ້ມູນ, ສະຖິຕິ, ສະພາບການ, ຈຸດພິເສດກ່ຽວກັບທີ່ດິນແຕ່ລະເຂດ, ແຕ່ລະປະເພດຢ່າງເປັນລະບົບ ແນໃສ່ຮັບໃຊ້ໃນການກຳນົດນະໂຍບາຍ, ການຄຸ້ມຄອງ, ການປົກປັກຮັກສາ, ການວາງແຜນນຳໃຊ້, ການຈັດສັນ, ການແບ່ງເຂດ, ການແບ່ງປະເພດ, ການພັດທະນາທີ່ດິນ, ການເກັບພາສີທີ່ດິນ ແລະ ການສະໜອງຂໍ້ມູນໃຫ້ແກ່ການລົງທຶນ.

ສູນຄົ້ນຄ້ວາ ແລະ ຂໍ້ມູນຂ່າວສານທີ່ດິນ ເປັນຜູ້ຮັບຜິດຊອບໃນການເກັບກຳຂໍ້ມູນ ແລະ ເກັບຮັກສາ, ຄົ້ນຄ້ວາ ແລະ ວິເຄາະ. ການນຳໃຊ້ ແລະ ພັດທະນາທີ່ດິນ ແລະ ການປັບປຸງລະບົບການຄຸ້ມຄອງຂໍ້ມູນຂ່າວສານກ່ຽວກັບທີ່ດິນໃຫ້ທັນສະໄໝ, ໄດ້ມາດຕະຖານ, ມີຄຸນນະພາບ, ຊັດເຈນ ແລະ ສະດວກໃນເວລານຳໃຊ້ ແລະ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ການວາງແຜນພັດທະນາທີ່ດິນ ແລະ ການປົກປັກຮັກສາສິ່ງແວດລ້ອມ. ການເກັບມ້ຽນຂໍ້ມູນທີ່ດິນຕ້ອງຮັກສາໄວ້ບ່ອນປອດໄພ ແລະ ເກັບເປັນຄວາມລັບສຳລັບຂໍ້ມູນທີ່ບໍ່ສາມາດເປີດເຜີຍໄດ້.

ການປ່ຽນແປງຂໍ້ມູນຈະປະຕິບັດໄດ້ກໍ່ຕໍ່ເມື່ອໄດ້ຮັບການເຫັນດີຈາກອົງການຄຸ້ມຄອງທີ່ດິນແຫ່ງຊາດ ເສຍກ່ອນ.

## ມາດຕາ 13. ການປະເມີນມູນຄ່າທີ່ດິນ

ການປະເມີນມູນຄ່າທີ່ດິນຂັ້ນສູນກາງ ແມ່ນໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ຮັບຜິດຊອບໃນການປະເມີນມູນຄ່າທີ່ດິນ ແຕ່ລະຈຸດ, ແຕ່ລະເຂດ ແລະ ແຕ່ລະປະເພດ ໂດຍປະສານສົມທົບກັບບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາຕົກລົງຮັບຮອງເອົາ. ການປະເມີນມູນຄ່າທີ່ດິນ ແມ່ນເພື່ອຮັບໃຊ້ໃຫ້ແກ່ການຈັດທະບຽນ, ການເວນຄືນທີ່ດິນ, ການເຊົ່າ ຫຼື ສຳປະທານ ແລະ ການໂອນສິດນຳໃຊ້ທີ່ດິນ. ບໍ່ໃຫ້ເກີນ ສອງ ປີ

ຕ້ອງໄດ້ກວດກາ ແລະ ປະເມີນຄືນໃໝ່, ໃນການປະເມີນມູນຄ່າທີ່ດິນຢູ່ທ້ອງຖິ່ນນັ້ນມອບໃຫ້ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ແລະ ເມືອງ, ເທດສະບານ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຜູ້ດຳເນີນການສຶກສາຄົ້ນຄວ້າລາຍງານຂໍຄຳເຫັນຈາກອົງການປົກຄອງຂັ້ນ ຂອງຕົນແລ້ວນຳສະເໜີຕໍ່ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ພິຈາລະນາຕົກລົງ.

ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ ແລະ ໜ່ວຍງານທີ່ດິນ ປະຈຳບ້ານ ມີໜ້າທີ່ສະໜອງຂໍ້ມູນ ແລະ ອາດຈະຖືກເຊີນເຂົ້າຮ່ວມໃນວຽກງານການປະເມີນມູນຄ່າທີ່ດິນຢູ່ຂັ້ນແຂວງ, ນະຄອນ.

## ມາດຕາ 14. ລາຍຮັບຈາກທີ່ດິນ

ລາຍຮັບຈາກທີ່ດິນໝາຍເຖິງລາຍໄດ້ຈາກການເກັບພາສີທີ່ດິນ, ອາກອນທີ່ດິນ, ຄ່າທຳນຽມ, ຄ່າຈົດທະບຽນ, ຄ່າເຊົ່າ, ຄ່າສຳປະທານທີ່ດິນ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການທັບປ່ຽນທີ່ດິນ, ຄ່າບໍລິການ ແລະ ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ອົງການຄຸ້ມຄອງທີ່ດິນຮັບຜິດຊອບເກັບພາສີທີ່ດິນ, ຄ່າທຳນຽມ, ອາກອນທີ່ດິນຄ່າຈົດທະບຽນທີ່ດິນ, ຄ່າເຊົ່າ, ຄ່າສຳປະທານ, ຄ່າຂາຍສິດນຳໃຊ້ທີ່ດິນ, ຄ່າປັບໃໝ, ຄ່າທົດແທນການທັບປ່ຽນທີ່ດິນ ແລະ ລາຍຮັບອື່ນໆກ່ຽວກັບທີ່ດິນ. ແລະ ຄ່າບໍລິການວິຊາການກ່ຽວກັບທີ່ດິນເຊັ່ນ: ຄ່າສຳຫຼວດວັດແທກ, ແຕ້ມແຜນ ທີ່, ຄ່າຂາຍແບບຟອມ.

ລາຍຮັບທີ່ເກັບໄດ້ຈາກທີ່ດິນຕ້ອງຖອກເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານ ແລະ ຕາມດຳລັດຂອງນາຍົກວ່າດ້ວຍລາຍຮັບວິຊາການ.

## ມາດຕາ 15. ການຂຶ້ນທະບຽນ ແລະ ຈົດທະບຽນເອກະສານທີ່ດິນ

ອົງການຄຸ້ມຄອງທີ່ດິນເປັນຜູ້ຮັບຜິດຊອບປະຕິບັດການຂຶ້ນທະບຽນ ແລະ ການຈົດທະບຽນເອກະສານທີ່ດິນໃນຂອບເຂດທົ່ວປະເທດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຫາ 51 ຂອງກົດໝາຍວ່າດ້ວຍທີ່ດິນ ຕາມການແບ່ງງານດັ່ງນີ້:

- ອົງການຄຸ້ມຄອງທີ່ດິນແຫ່ງຊາດຮັບຜິດຊອບຄົ້ນຄວ້າວາງກົນໄກ, ລະບຽບການ ແລະ ຕິດຕາມກວດກາກ່ຽວກັບການຂຶ້ນ ແລະ ຈົດທະບຽນທີ່ດິນ;
- ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ຮັບຜິດຊອບການຂຶ້ນ ແລະ ຈົດທະບຽນ, ຢັ້ງຢືນສິດໃຊ້ ແລະ ສິດນຳໃຊ້ທີ່ດິນ, ອອກໃບແຜນທີ່ດິນ, ອອກໃບຕາດິນ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ;
- ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານຮັບຜິດຊອບກວດກາ, ວັດແທກ ແລະປະກອບສຳນວນເອກະສານການຂຶ້ນ ແລະ ຈົດທະບຽນທີ່ດິນ, ອອກໃບຢັ້ງຢືນສິດໃຊ້ຊົ່ວຄາວ ຕາມແຜນການສຳຫຼວດ, ຈັດສັນ ແລະ ແຜນນຳໃຊ້ທີ່ດິນ;
- ໜ່ວຍງານທີ່ດິນ ປະຈຳບ້ານ ມີໜ້າທີ່ສະໜອງຂໍ້ມູນກ່ຽວກັບທີ່ດິນ ເພື່ອປະກອບສຳນວນເອກະສານຂໍຂຶ້ນ ແລະ ຈົດທະບຽນທີ່ດິນໂດຍມີການຢັ້ງຢືນຂອງນາຍບ້ານແລ້ວສົ່ງໃຫ້ອົງການຄຸ້ມຄອງທີ່ດິນປະຈຳເມືອງ, ເທດສະບານພິຈາລະນາ, ຄຸ້ມຄອງ ແລະ

ປົກປັກຮັກສາທີ່ດິນຂອງລັດ, ລວມໝູ່ຢູ່ໃນຂອບເຂດຂອງບ້ານ ແລະ ກວດກາການນຳໃຊ້ທີ່ດິນຂອງສ່ວນບຸກຄົນ ແລະ ການຈັດຕັ້ງ ຢູ່ຂອບເຂດບ້ານຂອງຕົນ.

**ມາດຕາ 16. ເອກະສານຢັ້ງຢືນສິດນຳໃຊ້ ແລະ ສິດໃຊ້ທີ່ດິນ**

<u>ເອກະສານຢັ້ງຢືນສິດນຳໃຊ້ ປະກອບມີ</u>: ໃບຕາດິນ

- ໃບຕາດິນ ແມ່ນເອກະສານຢັ້ງຢືນສິດນຳໃຊ້ທີ່ດິນສູງສຸດທາງດ້ານກົດໝາຍ, ມີແຕ່ຜູ້ມີຊື່ ທີ່ມີສິດໃນໃບຕາດິນເທົ່ານັ້ນ ຈຶ່ງຖືວ່າເປັນເຈົ້າຂອງໃບຕາດິນ ແລະ ມີສິດນຳໃຊ້ເປັນຫຼັກຊັບຄ້ຳປະກັນ, ເຂົ້າຮຸ້ນ, ມອບ, ຊື້-ຂາຍ, ແລກປ່ຽນ, ໃຫ້ເຊົ່າ, ໃຫ້ສືບທອດ. ໃນການປະຕິບັດສິດດັ່ງກ່າວເຈົ້າຂອງໃບຕາດິນມີສິດມອບໃຫ້ຜູ້ອື່ນດຳເນີນແທນຕົນກໍ່ໄດ້ ໂດຍມີການມອບໝາຍຢ່າງເປັນລາຍລັກອັກສອນ ແລະ ມີການຢັ້ງຢືນຈາກສຳນັກງານທະບຽນສານ ຫຼື ນາຍບ້ານ.

<u>ເອກະສານຢັ້ງຢືນສິດໃຊ້ປະກອບມີ</u> : ໃບແຜນທີ່ດິນ, ໃບຢັ້ງຢືນທີ່ດິນ, ໃບຢັ້ງຢືນເຄົ້າມູນທີ່ດິນ ແລະ ໃບຢັ້ງຢືນການພັດທະນາທີ່ດິນ.

-ໃບແຜນທີ່ດິນ ແມ່ນເອກະສານຢັ້ງຢືນສິດໃຊ້ທີ່ດິນ ທີ່ລັດມອບສິດໃຊ້ໃຫ້ບຸກຄົນ ຫຼື ອົງການຈັດຕັ້ງລັດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງເສດຖະກິດຂອງລັດ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ຕາມແຕ່ລະປະເພດທີ່ດິນທີ່ໄດ້ກຳນົດໄວ້ໃນກົດໝາຍ. ການຈັດຕັ້ງທີ່ໄດ້ຮັບໃບແຜນທີ່ດິນ ບໍ່ມີສິດໂອນ, ໃຫ້ເຊົ່າ, ໃຫ້ສຳປະທານ, ເອົາໄປເປັນຮຸ້ນ ຫຼື ນຳໄປຄ້ຳປະກັນແຕ່ຢ່າງໃດ. ສຳລັບບຸກຄົນທີ່ໄດ້ຮັບໃບແຜນທີ່ດິນມີພຽງແຕ່ສິດຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້, ໄດ້ຮັບໝາກຜົນຈາກທີ່ດິນ ແລະ ສືບທອດເທົ່ານັ້ນ. ໃນກໍລະນີຜູ້ທີ່ໄດ້ຮັບໃບແຜນທີ່ດິນເອົາໄປໃຫ້ເຊົ່າ ຫຼື ໄປຄ້ຳປະກັນຢູ່ທະນາຄານ ຫຼື ສະຖາບັນການເງິນແລ້ວນັ້ນ ແມ່ນໃຫ້ສະເໜີຂໍໃບຕາດິນ ເພື່ອເປັນເອກະສານຢັ້ງຢືນສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ.

-ໃບຢັ້ງຢືນທີ່ດິນ ແມ່ນເອກະສານຢັ້ງຢືນກ່ຽວກັບການນຳໃຊ້ທີ່ດິນຊົ່ວຄາວທີ່ອົງການປົກຄອງເມືອງ, ເທດສະບານ ອອກໃຫ້ຕາມນະໂຍບາຍການຈັດສັນທີ່ດິນ ແລະ ມອບດິນ - ມອບປ່າໃນເມື່ອມີການພັດທະນາເກີນກວ່າ ສາມປີ ແລ້ວຜູ້ທີ່ໄດ້ຮັບໃບຢັ້ງຢືນການພັດທະນາທີ່ດິນມີສິດຂໍໃບຕາດິນ ຊຶ່ງເປັນເອກະສານຢັ້ງຢືນສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ.

-ໃບຢັ້ງຢືນການພັດທະນາທີ່ດິນ ແມ່ນເອກະສານທາງການທີ່ຂະແໜງການຄຸ້ມຄອງການນຳໃຊ້ທີ່ດິນກ່ຽວຂ້ອງອອກໃຫ້ຕາມແຜນພັດທະນາທີ່ດິນ ທີ່ມີການຈັດສັນໄວ້ ເພື່ອຮັບຮອງວ່າທີ່ດິນຕອນນັ້ນໄດ້ພັດທະນາແລ້ວ. ໃບຢັ້ງຢືນດັ່ງກ່າວນີ້ໃຊ້ເພື່ອປະກອບສຳນວນເອກະສານຂໍຂຶ້ນທະບຽນທີ່ດິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ແລະ 43 ຂອງກົດໝາຍວ່າດ້ວຍທີ່ດິນ.

-ໃບຢັ້ງຢືນເຄົ້າມູນທີ່ດິນ ແມ່ນເອກະສານຢັ້ງຢືນກ່ຽວກັບການໄດ້ທີ່ດິນມາ ເພື່ອຊີ້ແຈງໃຫ້ເຫັນປະຫວັດຄວາມເປັນມາຂອງການປົກປັກຮັກສາ ແລະ ນຳໃຊ້.

ຊຶ່ງບັນດາເອກະສານດັ່ງກ່າວ ໄດ້ມີແບບຟອມສະເພາະໂດຍແຕ່ລະແບບຟອມແມ່ນມີລັກສະນະແຕກຕ່າງກັນ.

## ໝວດທີ III
## ການຈັດສັນທີ່ດິນ, ການນຳໃຊ້ທີ່ດິນ ແລະ ການປ່ຽນແປງປະເພດທີ່ດິນ

### ມາດຕາ 17. ການຈັດສັນທີ່ດິນ

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ມີໜ້າທີ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນ ເພື່ອດຳເນີນການສຳຫຼວດ, ຈັດສັນແບ່ງເຂດ ແລະ ແບ່ງປະເພດທີ່ດິນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 11 ແລະ 12 ຂອງກົດໝາຍວ່າດ້ວຍທີ່ດິນໃນຂອບເຂດທົ່ວປະເທດ ແລ້ວລາຍງານໃຫ້ລັດຖະບານ ເພື່ອສະເໜີຕໍ່ສະພາແຫ່ງຊາດຮັບຮອງເອົາ.

ການຈັດສັນທີ່ດິນ, ການແບ່ງເຂດ, ແບ່ງປະເພດທີ່ດິນ ຕ້ອງໃຫ້ສອດຄ່ອງກັບແຜນຍຸດທະສາດໃນການນຳໃຊ້ຊັບພະຍາກອນທຳມະຊາດ (ທີ່ດິນ, ນ້ຳ, ປ່າໄມ້, ບໍ່ແຮ່, ຊີວະນາໆພັນ), ແຜນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມໃນແຕ່ລະໄລຍະ.

### ມາດຕາ 18. ການນຳໃຊ້ທີ່ດິນແຕ່ລະປະເພດ

ການນຳໃຊ້ທີ່ດິນແຕ່ລະປະເພດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ.

ໃນກໍລະນີເຂດ ແລະ ປະເພດທີ່ດິນໃດຍັງບໍ່ທັນມີນິຕິກຳ ຫຼື ມີນິຕິກຳແຕ່ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ຂະແໜງການທີ່ກ່ຽວຂ້ອງປະສານສົມທົບກັບອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳດັ່ງກ່າວເພື່ອສະເໜີໃຫ້ລັດຖະບານຕົກລົງ.

### ມາດຕາ 19. ການປ່ຽນແປງປະເພດທີ່ດິນ

ລັດອະນຸຍາດ ໃຫ້ມີການປ່ຽນແປງປະເພດທີ່ດິນຈາກທີ່ດິນປະເພດໜຶ່ງໄປສູ່ອີກປະເພດໜຶ່ງ ຖ້າຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມຂອງລັດໂດຍບໍ່ມີຜົນກະທົບທີ່ຮ້າຍແຮງ ຕໍ່ຄວາມໝັ້ນຄົງຂອງຊາດ, ຕໍ່ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ.

ອົງການປົກຄອງເມືອງ, ເທດສະບານ ມີສິດຕົກລົງໃຫ້ປ່ຽນແປງປະເພດທີ່ດິນ ຕ່ຳກວ່າສາມ ເຮັກຕາ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ ແລະ ຂະແໜງການກ່ຽວຂ້ອງ.

ອົງການປົກຄອງແຂວງ, ນະຄອນ ມີສິດຕົກລົງໃຫ້ປ່ຽນແປງປະເພດທີ່ດິນແຕ່ ສາມເຮັກຕາ ຂຶ້ນໄປຫາ ໜຶ່ງຮ້ອຍ ເຮັກຕາ ຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ແລະ ຂະແໜງການກ່ຽວຂ້ອງ.

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ມີສິດຕົກລົງໃຫ້ປ່ຽນແປງປະເພດທີ່ດິນເກີນກວ່າ ໜຶ່ງຮ້ອຍ ເຮັກຕາຂຶ້ນໄປຫາ ສິບພັນເຮັກຕາ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ ແລະ ເປັນເອກະພາບກັບອົງການປົກຄອງທ້ອງຖິ່ນ ໂດຍໄດ້ຮັບການເຫັນດີຈາກລັດຖະບານ.

ລັດຖະບານ ມີສິດຕົກລົງໃຫ້ປ່ຽນແປງປະເພດທີ່ດິນເກີນກວ່າສິບພັນ ເຮັກຕາ ຂຶ້ນໄປ ຕາມການສະເໜີ ຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໂດຍໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ.

ທີ່ດິນ ທີ່ໄດ້ຮັບອະນຸຍາດໃຫ້ປ່ຽນແປງປະເພດໄປແລ້ວຕ້ອງນຳໃຊ້ໃຫ້ສອດຄ່ອງກັບເປົ້າໝາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ປ່ຽນແປງປະເພດທີ່ດິນຕ້ອງຮັບຜິດຊອບໃນການໃຊ້ແທນຄ່າເສັຍຫາຍ, ຄ່າຊັບພະຍາກອນ, ເສັຍຄ່າທຳນຽມ ແລະ ຄ່າບໍລິການອື່ນໆ ຕາມລະບຽບການ.

## ໝວດທີ IV
## ສິດນຳໃຊ້ ແລະ ສິດໃຊ້ທີ່ດິນ

### ມາດຕາ 20. ການໂອນສິດນຳໃຊ້ທີ່ດິນ

ການໂອນສິດນຳໃຊ້ທີ່ດິນ ໝາຍເຖິງການຂາຍ, ການມອບ ຫຼື ການແລກປ່ຽນສິດນຳໃຊ້ທີ່ດິນໃຫ້ແກ່ຜູ້ອື່ນ. ການໂອນສິດນຳໃຊ້ທີ່ດິນຈະດຳເນີນໄດ້ກໍ່ຕໍ່ເມື່ອທີ່ດິນຕອນນັ້ນມີໃບຕາດິນຢ່າງຖືກຕ້ອງຕາມກົດໝາຍ. ຜູ້ໂອນຕ້ອງແມ່ນຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຫຼື ຜູ້ທີ່ໄດ້ຮັບມອບສິດ, ຜູ້ຮັບໂອນຕ້ອງແມ່ນພົນລະເມືອງລາວ ຫຼື ການຈັດຕັ້ງຂອງລາວ.

ທຸກການໂອນສິດນຳໃຊ້ທີ່ດິນ, ຜູ້ໂອນຕ້ອງນຳເອົາສຳນວນເອກະສານທີ່ປະກອບດ້ວຍໃບຕາດິນ, ສັນຍາຊື້-ຂາຍ, ສັນຍາມອບໂອນ ຫຼື ແລກປ່ຽນ ເພື່ອເປັນການຢັ້ງຢືນຄວາມຖືກຕ້ອງໄປຈົດທະບຽນ ແລະ ໂອນຊື່ມາເປັນຂອງຜູ້ໄດ້ຮັບໂອນ ຢູ່ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນບ່ອນດິນຕັ້ງຢູ່ ແລະ ຕ້ອງເສັຍຄ່າທຳນຽມການໂອນສິດນຳໃຊ້ທີ່ດິນຕາມລະບຽບການ.

ສ່ວນບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບສິດໃຊ້ທີ່ດິນ ມີສິດພຽງແຕ່ປົກປັກຮັກສາ ແລະ ນຳໃຊ້ເທົ່ານັ້ນຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 59 ຂອງກົດໝາຍວ່າດ້ວຍທີ່ດິນ.

### ມາດຕາ 21. ການເຊົ່າ ຫຼື ການສຳປະທານທີ່ດິນ

ລັດຖະບານ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ, ມີສິດເອົາທີ່ດິນຂອງລັດໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນເຊົ່າ ຫຼື ສຳປະທານຕາມຂອບເຂດສິດຂອງຕົນ.

ພົນລະເມືອງລາວ ແລະ ການຈັດຕັ້ງເສດຖະກິດ - ສັງຄົມ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງມີສິດເອົາທີ່ດິນຂອງຕົນໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນເຊົ່າ.

ສັນຍາເຊົ່າ ຫຼື ສຳປະທານທີ່ດິນ ຕ້ອງກຳນົດເປົ້າໝາຍ, ຄ່າເຊົ່າ ຫຼື ສຳປະທານ, ກຳນົດເວລາເຊົ່າ ຫຼື ສຳປະທານຕົວຈິງ. ສຳລັບສັນຍາສຳປະທານຍັງຕ້ອງໄດ້ກຳນົດຄ່າຊັບພະຍາກອນອີກດ້ວຍ.

ຜູ້ໃຫ້ເຊົ່າທີ່ດິນ ທີ່ບໍ່ແມ່ນລັດຕ້ອງແຈ້ງຄ່າເຊົ່າຕົວຈິງເພື່ອເສຍອາກອນລາຍໄດ້ຈາກການເອົາທີ່ດິນໃຫ້ຜູ້ອື່ນເຊົ່າ.

ຜູ້ເຊົ່າ ຫຼື ຜູ້ສຳປະທານຕ້ອງນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມສັນຍາເຊົ່າ ຫຼື ສຳປະທານ, ຕາມລະບຽບກົດໝາຍ ແລະ ຢູ່ພາຍໃຕ້ການກວດກາຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດມີໜ້າທີ່ຄົ້ນຄວ້າລະບຽບການລະອຽດກ່ຽວກັບການເຊົ່າ ຫຼື ສຳປະທານທີ່ດິນ.

## ມາດຕາ 22. ສິດຈາກການເຊົ່າ ຫຼື ສຳປະທານທີ່ດິນ

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງ ຂອງບຸກຄົນດັ່ງກ່າວທີ່ໄດ້ເຊົ່າ ຫຼື ສຳປະທານທີ່ດິນຈາກລັດ ຫຼື ຈາກພົນລະເມືອງລາວ ຍັງມີສິດນຳເອົາສັນຍາເຊົ່າ ຫຼື ສຳປະທານທີ່ດິນ ໄປຮ່ວມທຶນກັບບຸກຄົນອື່ນ ຫຼື ເປັນຫຼັກຊັບຄ້ຳປະກັນຕາມອາຍຸການເຊົ່າ ຫຼື ສຳປະທານທີ່ຍັງເຫຼືອ ແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກລັດ ຫຼື ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນເສຍກ່ອນ. ສຳລັບອາຍຸສັນຍາເຊົ່າ ຫຼື ສຳປະທານທີ່ດິນໃຫ້ປະຕິບັດຕາມມາດຕາ 65 ຂອງກົດໝາຍວ່າດ້ວຍທີ່ດິນ.

## ມາດຕາ 23. ການຫັນສິດໃຊ້ທີ່ດິນໃຫ້ຜູ້ທີ່ໄດ້ຮັບນະໂຍບາຍຈາກລັດ

ລັດປະຕິບັດນະໂຍບາຍ ຫັນສິດໃຊ້ທີ່ດິນ ທີ່ມີສິ່ງປຸກສ້າງ ຫຼື ທີ່ດິນເປົ່າຫວ່າງໃຫ້ແກ່ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະ ນັກປະຕິວັດອາວຸໂສທີ່ມີຄຸນງາມຄວາມດີແກ່ປະເທດຊາດໃຫ້ເປັນກຳມະສິດໃນສິ່ງປຸກສ້າງ ແລະ ສິດນຳໃຊ້ທີ່ດິນຢ່າງຖາວອນ ໂດຍໃຫ້ປະຕິຕາມເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນດຳລັດສະບັບເລກທີ 343/ນຍ, ລົງວັນທີ 25 ກັນຍາ 2007 ວ່າດ້ວຍການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ.

ທີ່ດິນ ແລະ ສິ່ງປຸກສ້າງ ທີ່ໄດ້ຫັນມາເປັນສິດນຳໃຊ້ ແລະ ກຳມະສິດ ຂອງພະນັກງານລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບນະໂຍບາຍຈາກລັດນັ້ນ ໃຫ້ຖືວ່າເປັນຊັບເດີມ ຫຼື ສິນສົມສ້າງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄອບຄົວ.

ສຳລັບເນື້ອທີ່ດິນ ທີ່ໄດ້ຮັບນະໂຍບາຍຈາກລັດ ໃຫ້ຫັນມາເປັນສິດນຳໃຊ້ທີ່ດິນຢ່າງຊາດຕົວນັ້ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ.

ການຫັນສິດໃຊ້ທີ່ດິນໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 24. ການໂອນສິດນຳໃຊ້ທີ່ດິນໃຫ້ບຸກຄົນທີ່ໄດ້ຮັບສິດໃຊ້ທີ່ດິນໃນໄລຍະຜ່ານມາ**

ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ທີ່ບໍ່ນອນຢູ່ໃນມາດຕາ 23 ຂອງດຳລັດສະບັບນີ້ ຊຶ່ງໄດ້ຮັບສິດໃຊ້ທີ່ດິນຈາກອົງການຂອງລັດ, ກົມກອງປະກອບອາວຸດ, ອົງການຈັດຕັ້ງການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງເສດຖະກິດ ແລະ ລວມໝູ່ ໃນໄລຍະຜ່ານມາເປັນເວລາເກີນກວ່າ ສິບປີ ນັບແຕ່ມື້ເຂົ້າຄຸ້ມຄອງໂດຍບໍ່ມີຂໍ້ຂັດແຍ່ງໃດໆ ຫຼື ມີຂໍ້ຂັດແຍ່ງແຕ່ຫາກຖືກແກ້ໄຂໄປແລ້ວ ແມ່ນໃຫ້ປະຕິບັດນະໂຍບາຍຂາຍສິດນຳໃຊ້ທີ່ດິນຕອນນັ້ນໃຫ້ຜູ້ກ່ຽວຢ່າງຂາດຕົວ ດ້ວຍການຕີລາຄາທີ່ສົມເຫດສົມຜົນ ຕາມການປະເມີນຂອງອົງການຄຸ້ມຄອງທີ່ດິນ ໂດຍປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

ຫ້າມຂາຍສິດນຳໃຊ້ປະເພດທີ່ດິນ ແລະ ເຮືອນ ຊຶ່ງລັດມີແຜນການນຳໃຊ້ ແລະ ພັດທະນາເພື່ອສາທາລະນະປະໂຫຍດ, ສະຫງວນໄວ້ ເພື່ອການອະນຸລັກທາງດ້ານປະຫວັດສາດ ແລະ ວັດທະນະທຳຂອງຊາດ, ທີ່ດິນ ແລະ ເຮືອນທີ່ນອນຢູ່ໃນເຂດສະຫງວນ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍທາງດ້ານການເມືອງ, ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ສາທາລະນະປະໂຫຍດອື່ນໆ.

ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາອະນຸມັດຂາຍສິດນຳໃຊ້ທີ່ດິນດັ່ງກ່າວຕາມລະບຽບການ.

**ມາດຕາ 25. ການໂອນສິດນຳໃຊ້ທີ່ດິນ ແລະ ເຮືອນຂອງຜູ້ປະໜີ**

ທີ່ດິນ ແລະເຮືອນຂອງຜູ້ປະໜີ ທີ່ລັດອະນຸຍາດໃຫ້ຍາດໃກ້ຊິດຂອງຜູ້ກ່ຽວ ຫຼືບຸກຄົນອື່ນໄດ້ປົກປັກຮັກສາ ແລະໃຊ້ຢ່າງສະຫງົບເປັນປົກກະຕິເກີນກວ່າ ສິບປີ ມາແລ້ວແມ່ນໃຫ້ຕີລາຄາຂາຍສິດນຳໃຊ້ທີ່ດິນ ແລະເຮືອນດັ່ງກ່າວໃຫ້ແກ່ຜູ້ປົກປັກຮັກສາ ແລະ ໃຊ້ຢ່າງຂາດຕົວ.

ອົງການຄຸ້ມຄອງທີ່ດິນ ເປັນຜູ້ຮັບຜິດຊອບໃນການຕີລາຄາຂາຍສິດນຳໃຊ້ທີ່ດິນ. ສ່ວນສິ່ງປຸກສ້າງຂອງລັດ ແມ່ນໃຫ້ກະຊວງການເງິນເປັນຜູ້ຮັບຜິດຊອບຕີລາຄາຂາຍສິດນຳໃຊ້ສິ່ງປຸກສ້າງດັ່ງກ່າວ.

**ມາດຕາ 26. ສິດໃຊ້ທີ່ດິນຕາມປະເພນີ**

ສິດໃຊ້ທີ່ດິນຕາມປະເພນີແມ່ນການປົກປັກຮັກສາ ແລະ ໃຊ້ທີ່ດິນດ້ວຍການບຸກເບີກພັດທະນາທີ່ດິນ ຫຼື ຕາມການຈັດສັນທີ່ດິນຂອງລັດ ມາເປັນປົກກະຕິ, ຕໍ່ເນື່ອງ ແລະ ຍາວນານມາຮອດປະຈຸບັນໂດຍບໍ່ມີເອກະສານໃດຢັ້ງຢືນສິດໃຊ້ຂອງຜູ້ກ່ຽວ, ການຈັດຕັ້ງ ຫຼື ຂອງລວມບ້ານ.

ລັດຮັບຮູ້ສິດໃຊ້ທີ່ດິນ ຕາມປະເພນີຂອງບຸກຄົນ, ການຈັດຕັ້ງ ຫຼື ຂອງລວມບ້ານດ້ວຍການອອກໃບຕາດິນ ຫຼື ໃບແຜນທີ່ດິນ ຫຼື ໃບຢັ້ງຢືນທີ່ດິນໃຫ້ຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ໂດຍຜ່ານການຮ້ອງຂໍຂຶ້ນທະບຽນທີ່ດິນນຳອົງການຄຸ້ມຄອງທີ່ດິນ.

ການຮ້ອງຂໍຂຶ້ນທະບຽນທີ່ດິນຕ້ອງປະກອບເອກະສານໃບຢັ້ງຢືນເຄົ້າມູນທີ່ດິນ, ພະຍານ, ຜູ້ໄດ້ຮັບສິດນຳໃຊ້ທີ່ດິນຂ້າງຄຽງ ແລະ ອົງການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່.

**ມາດຕາ 27. ການຖອນສິດນຳໃຊ້ ແລະ ສິດໃຊ້ທີ່ດິນ**

ຜູ້ທີ່ຮັບສິດນຳໃຊ້, ສິດໃຊ້ທີ່ດິນ ຈະຖືກຖອນສິດນຳໃຊ້ ຫຼື ສິດໃຊ້ໃນກໍລະນີ ທີ່ໄດ້ກຳນົດໄວ້ມາດຕາ 62 ຂອງກົດໝາຍວ່າດ້ວຍທີ່ດິນ.

ອົງການຄຸ້ມຄອງທີ່ດິນ ເປັນຜູ້ຕົກລົງຖອນສິດນຳໃຊ້ ຫຼື ສິດໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ຢູ່ຂໍ້ 4 ມາດຕາ 10 ຂອງກົດໝາຍວ່າດ້ວຍທີ່ດິນ. ກ່ອນຈະຖອນສິດນັ້ນຕ້ອງໄດ້ແຈ້ງເປັນລາຍລັກອັກສອນໃຫ້ຜູ້ທີ່ຈະຖືກຖອນສິດນຳໃຊ້ ຫຼື ສິດໃຊ້ຊາບລ່ວງໜ້າຢ່າງ ໜ້ອຍ ຫົກ ເດືອນ.

ໃນການຈັດຕັ້ງປະຕິບັດຕົວຈິງ ໃຫ້ມີການສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນບ່ອນທີ່ດິນຕັ້ງຢູ່.

**ມາດຕາ 28. ການທົດແທນຄ່າເສັຍຫາຍ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ກໍ່ຄວາມເສັຍຫາຍໃຫ້ແກ່ຜູ້ອື່ນ ທີ່ໄດ້ຮັບສິດນຳໃຊ້ ຫຼື ສິດໃຊ້ທີ່ດິນ ຕ້ອງໄດ້ໃຊ້ແທນຄ່າເສັຍຫາຍໃຫ້ແກ່ຜູ້ຖືກເສັຍຫາຍຕາມແຕ່ກໍລະນີດັ່ງນີ້:

1. ເມື່ອມີຄວາມຈຳເປັນທີ່ຈະຕ້ອງໄດ້ນຳໃຊ້ທີ່ດິນເຂົ້າໃນສາທາລະນະປະໂຫຍດ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຫຼື ນຳໃຊ້ເຂົ້າໃນການພັດທະນາໃດໜຶ່ງຂອງລັດ;
2. ຈາກການນຳໃຊ້ທີ່ດິນ ເຮັດທາງຜ່ານ, ຮ່ອງຊົນລະປະທານ, ແລວສາຍໄຟຟ້າ, ແລວທໍ່ນ້ຳປະປາ ແລະ ອື່ນໆທີ່ເປັນກິດຈະການຂອງລັດ ທີ່ຕົນໄດ້ຮັບຄວາມເສັຍຫາຍ ເວັ້ນເສັຍແຕ່ຜູ້ກ່ຽວໄດ້ຮັບຜົນປະໂຫຍດຈາກກິດຈະການດັ່ງກ່າວ;
3. ຍ້ອນການກະທຳອື່ນໆ ທີ່ພາໃຫ້ທີ່ດິນຂ້າງຄຽງເຊາະເຈື່ອນ, ເປ່ເພ, ເສັຍຫາຍເຊັ່ນ: ການຂຸດຂຸມ, ຂຸດບໍ່ນ້ຳ, ຂຸດໜອງປາ, ຂຸດຮ່ອງນ້ຳ, ຂຸດດິນໄປຂາຍ ແລະ ອື່ນໆ.

ການທົດແທນຄ່າເສັຍຫາຍອາດຈະເປັນເງິນ, ວັດຖຸ ຫຼື ທີ່ດິນແລກປ່ຽນກໍ່ໄດ້ແລ້ວແຕ່ກໍລະນີຕາມການຕົກລົງເຫັນດີຂອງສອງຝ່າຍ ແລະ ຕາມຄວາມເໝາະສົມ.

**ມາດຕາ 29. ການປະເມີນຄ່າເສັຍຫາຍ**

ການປະເມີນຄ່າເສັຍຫາຍໃຫ້ປະຕິບັດຕາມການປະເມີນລາຄາຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ພາຍຫຼັງທີ່ໄດ້ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງແລ້ວ.

## ໝວດທີ V

## ການກວດກາ ແລະ ການແກ້ໄຂບັນຫາທີ່ດິນ

**ມາດຕາ 30. ການກວດກາກ່ຽວກັບທີ່ມາຂອງສິດນຳໃຊ້ ແລະ ສິດໃຊ້ທີ່ດິນ**

ການກວດກາມີສາມປະເພດ ດັ່ງນີ້:

1. ການກວດກາຢ່າງເປັນລະບົບຕາມປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາໂດຍບໍ່ແຈ້ງໃຫ້ຮູ້ລ່ວງໜ້າ.

ການກວດກາຢ່າງເປັນລະບົບຕາມປົກກະຕິແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງດຳເນີນການໂດຍກົມນະໂຍບາຍ ແລະກວດກາການນຳໃຊ້ທີ່ດິນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາເມື່ອເຫັນວ່າມີຄວາມຈຳເປັນໂດຍມີການແຈ້ງໃຫ້ຜູ້ນຳໃຊ້ ຫຼື ຜູ້ໃຊ້ທີ່ດິນຮູ້ລ່ວງໜ້າຢ່າງໜ້ອຍ ສີ່ສິບແປດ ຊົ່ວໂມງ ຊຶ່ງດຳເນີນໂດຍອົງການຄຸ້ມຄອງທີ່ດິນ.

ການກວດກາໂດຍບໍ່ແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາເມື່ອເຫັນວ່າມີການລະເມີດລະບຽບກົດໝາຍທີ່ຕ້ອງດຳເນີນການຢ່າງຮີບດ່ວນ.

ລັດຖະບານມອບສິດໃຫ້ອົງການຄຸ້ມຄອງທີ່ດິນ ເປັນຜູ້ດຳເນີນການກວດກາທັງສາມປະເພດ. ໃນກໍລະນີເປັນພິເສດລັດຖະບານ ຈະແຕ່ງຕັ້ງຄະນະກຳມະການສະເພາະກິດລົງກວດກາຕາມການສະເໜີຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ.

ທຸກການກວດກາຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມມາດຕາ 79 ຂອງກົດໝາຍວ່າດ້ວຍທີ່ດິນ.

## ມາດຕາ 31. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຕ້ອງປະຕິບັດໃຫ້ສອດຄ່ອງກັບມາດຕາ 73, 74, 75, 76, 80 ແລະ 81 ຂອງກົດໝາຍວ່າດ້ວຍທີ່ດິນ. ສຳລັບຄະດີຕ່າງໆກ່ຽວກັບທີ່ດິນ ທີ່ສານໄດ້ຕັດສິນຢ່າງຖືກຕ້ອງ ແລະ ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນໃຫ້ປະຕິບັດຢ່າງເຂັ້ມງວດ.

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ມີຈຸດປະສົງຢາກແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ຕ້ອງໄດ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງຕໍ່ອົງການຄຸ້ມຄອງທີ່ດິນ ເພື່ອຄົ້ນຄວ້າແກ້ໄຂໂດຍສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນທີ່ດິນຕັ້ງຢູ່. ໃນກໍລະນີທີ່ອົງການຄຸ້ມຄອງທີ່ດິນບໍ່ສາມາດແກ້ໄຂໄດ້ກໍ່ໃຫ້ດຳເນີນການແກ້ໄຂໄປຕາມຂະບວນການຍຸຕິທຳ.

## ມາດຕາ 32. ການແກ້ໄຂບັນຫາທີ່ດິນສ່ວນເກີນ

ການແກ້ໄຂບັນຫາທີ່ດິນສ່ວນເກີນກວ່າອັດຕາຂອງແຕ່ລະປະເພດທີ່ດິນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ໃຫ້ປະຕິບັດດັ່ງນີ້:

1. ໂອນສິດນຳໃຊ້ທີ່ດິນສ່ວນເກີນອັດຕາໃຫ້ແກ່ຍາດພີ່ນ້ອງ ຫຼື ບຸກຄົນອື່ນທີ່ມີເງື່ອນໄຂ;
2. ຖ້າຫາກຢາກຮັກສາສິດນຳໃຊ້ທີ່ດິນສ່ວນເກີນໄວ້ ຕ້ອງເສຍພາສີທີ່ດິນເພີ່ມຫ້າເທົ່າຂອງອັດຕາພາສີທີ່ດິນປົກກະຕິ ເປັນແຕ່ລະປີ.

ພາຍໃນກຳນົດ ສາມປີ ນັບແຕ່ມື້ລັດຖະບານໄດ້ອອກຄຳສັ່ງກ່ຽວກັບການແກ້ໄຂເນື້ອທີ່ດິນສ່ວນເກີນຢ່າງເປັນທາງການເປັນຕົ້ນໄປ ຫາກບໍ່ແກ້ໄຂຕາມຂໍ້ 1 ຫຼື 2 ຂອງມາດຕານີ້ສິດນຳໃຊ້ທີ່ດິນສ່ວນເກີນນັ້ນຈະຕົກເປັນທີ່ດິນລັດຄຸ້ມຄອງ.

## ມາດຕາ 33. ວິທີຄິດໄລ່ພາສີທີ່ດິນສ່ວນເກີນ

ວິທີຄິດໄລ່ພາສີທີ່ດິນສ່ວນເກີນໃຫ້ເອົາຈຳນວນເນື້ອທີ່ດິນທັງໝົດລົບໃຫ້ເນື້ອທີ່ດິນທີ່ກົດໝາຍກຳນົດໄວ້ແລ້ວເອົາຜົນທີ່ໄດ້ຮັບນັ້ນຄູນກັບອັດຕາພາສີທີ່ດິນ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍພາສີທີ່ດິນແລ້ວຈາກນັ້ນ ຄູນໃຫ້ ຫ້າ.

## ມາດຕາ 34. ການແກ້ໄຂບັນຫາທີ່ດິນຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ.

ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວບໍ່ມີສິດໄດ້ຮັບສິດນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ. ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນໃນໄລຍະຜ່ານມາຕ້ອງແກ້ໄຂທີ່ດິນຂອງຕົນພາຍໃນການກຳນົດ ສາມ ປີ ນັບແຕ່ວັນທີ່ລັດຖະບານ ໄດ້ອອກຄຳສັ່ງກ່ຽວກັບການແກ້ໄຂທີ່ດິນຂອງຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວດ້ວຍການໂອນສິດນຳໃຊ້ທີ່ດິນໃຫ້ແກ່ພົນລະເມືອງລາວ ຫຼື ການຈັດຕັ້ງລັດຂອງ ສປປ ລາວ. ຖ້າບໍ່ໂອນພາຍໃນກຳນົດ ສາມປີ ຕາມທີ່ກ່າວມາຂ້າງເທິງນີ້ ທີ່ດິນດັ່ງກ່າວກໍ່ຈະຕົກເປັນທີ່ດິນລັດຄຸ້ມຄອງແຕ່ຜູ້ກ່ຽວມີບູລິມະສິດໃນການຂໍເຊົ່າ ຫຼື ສຳປະທານທີ່ດິນນັ້ນນຳລັດ.

ໃນກໍລະນີພົນລະເມືອງລາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຫາກໄດ້ປ່ຽນແປງສັນຊາດເປັນສັນຊາດອື່ນນັ້ນກໍ່ໃຫ້ປະຕິບັດຄືກັນກັບຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວຄືໄດ້ກຳນົດໄວ້ໃນວັກທີ່ໜຶ່ງຂອງມາດຕານີ້.

# ໝວດທີ VI
# ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

## ມາດຕາ 35. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼື ອົງການຈັດຕັ້ງໃດທີ່ໄດ້ນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍທີ່ດິນ, ມີປະສິດທິພາບ ແລະ ປະສິດທິຜົນສູງເຮັດໃຫ້ທີ່ດິນມີຄຸນຄ່າ ແລະ ມູນຄ່າເພີ່ມຂຶ້ນຈະໄດ້ຮັບນະໂຍບາຍຫຼຸດຜ່ອນພາສີ, ອາກອນ, ໄດ້ຮັບຄວາມສະດວກໃນການຕໍ່ອາຍຸສັນຍາເຊົ່າ ຫຼື ສຳປະທານ.

## ມາດຕາ 36. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງໃດຫາກໄດ້ຈັບຈອງທີ່ດິນ ທີ່ບໍ່ຖືກຕ້ອງຕາມກົດໝາຍຈະຖືກສຶກສາອົບຮົມ ແລະ ຖອນເອົາທີ່ດິນຄືນເປັນຂອງລັດ ໃນກໍລະນີຫາກໄດ້ກໍ່ຄວາມເສັຍຫາຍຈະຖືກປັບໃໝ ຫຼື ດຳເນີນຄະດີຕາມຂະບວນການຍຸຕິທຳ.

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຫາກປ່ຽນແປງປະເພດທີ່ດິນ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝສອງເທົ່າຂອງມູນຄ່າຜົນເສັຍຫາຍ. ສຳລັບທີ່ດິນກະສິກຳຈະຖືກປັບໃໝ ຫ້າເທົ່າ ຂອງຜົນຜະລິດສະເລ່ຍໃນປີນັ້ນ.

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງຫາກໄດ້ນຳໃຊ້ ຫຼື ໃຊ້ທີ່ດິນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ ຈະຖືກສຶກສາອົບຮົມ ຖ້າຫາກຍັງບໍ່ມີການປ່ຽນແປງຈະຖືກປັບໃໝ ສອງສ່ວນຮ້ອຍ ຂອງມູນຄ່າທີ່ດິນ ຕາມການປະເມີນລາຄາໃນເວລາ ແລະ ທ້ອງຖິ່ນນັ້ນ. ໃນກໍລະນີບໍ່ເຊັດຫຼາບຈະຖືກຖອນສິດນຳໃຊ້ ຫຼື ສິດໃຊ້ທີ່ດິນ.

ພະນັກງານລັດຖະກອນຄຸ້ມຄອງທີ່ດິນຜູ້ໃດຫາກໄດ້ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ, ຮັບສິນບົນ, ປອມແປງເອກະສານຈະຖືກປະຕິບັດວິໄນຕາມລະບຽບລັດຖະກອນ ພ້ອມທັງຖືກດຳເນີນຄະດີຕາມກົດໝາຍ.

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກໃຫ້ສິນບົນແກ່ພະນັກງານ, ລັດຖະກອນຄຸ້ມຄອງທີ່ດິນເພື່ອໃຫ້ໄດ້ສິດນຳໃຊ້, ສິດໃຊ້, ໃບຕາດິນ ຫຼື ເອກະສານຢັ້ງຢືນອື່ນໆ ກໍ່ຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 37. ການຈັດຕັ້ງປະຕິບັດ

ມອບໃຫ້ອົງການຄຸ້ມຄອງທີ່ດິນ ແຫ່ງຊາດ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 38. ຜົນສັກສິດ

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 101/ນຍ, ລົງວັນທີ 20 ເມສາ 2005.

ທຸກຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ອນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ